ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ປາຖະກະຖາມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງ ສະຫະພັນແມ່ຍິງລາວ ຄົບຮອບ 68 ປີ (20 ກໍລະກົດ 1955 – 20 ກໍລະກົດ 2023)




ໃນວັນທີ 04 ສິງຫາ 2023 ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີປາຖະກະຖາມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງ ສະຫະພັນແມ່ຍິງລາວ ຄົບຮອບ 68 ປີ (20 ກໍລະກົດ 1955 – 20 ກໍລະກົດ 2023) ຂຶ້ນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ນ ຂັນແກ້ວ ຫຼ້າມະນີເງົາ ຄະນະປະຈຳພັກ, ຮອງຜູ້ວ່າການ ທຫລ, ຜູ້ຊີ້ນຳວຽກງານສາມອົງການຈັດຕັ້ງມະຫາຊົນ ທຫລ; ບັນຍາຍໂດຍທ່ານ ນ ສາຍສະໝອນ ຈັນທະຈັກ ຄະນະບໍລິຫານງານສູນກາງແມ່ຍິງລາວ ສະໄໝທີ IX, ປະທານຄະນະບໍລິຫານງານ ສະຫະພັນແມ່ຍິງ ທຫລ; ມີຕາງໜ້າຈາກຄະນະສະຫະພັນແມ່ຍິງລາວ, ຄະນະກົມ-ທຽບເທົ່າກົມ, ຄະນະພະແນກ ແລະ ສະມາຊິກຈາກສາມອົງການຈັດຕັ້ງມະຫາຊົນພາຍໃນ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.



ຈຸດປະສົງພິທີປາຖະກະຖາມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ ໃນຄັ້ງນີ້, ເພື່ອແນ່ໃສ່ໃຫ້ສະມາຊິກແມ່ຍິງ ແລະ ສາມອົງການຈັດຕັ້ງມະຫາຊົນ ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ມູນເຊື້ອ, ການເຕີບໃຫຍ່ຂະຫຍາຍຕົວ ແລະ ຜົນງານການເຄື່ອນໄຫວວຽກງານອັນພົ້ນເດັ່ນໃນແຕ່ລະໄລຍະຂອງອົງການຈັດຕັ້ງສະຫະພັນແມ່ຍິງລາວ ທີ່ໄດ້ພ້ອມພຽງກັນສຸມທຸກເຫື່ອແຮງ, ສະຕິປັນຍາ ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປະຈຸບັນ ຜ່ານການຮັບຟັງ ເຫັນວ່າ ສະມາຊິກແມ່ຍິງ ແລະ ສາມອົງການຈັດຕັ້ງມາຫາຊົນ ສາມາດຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊີງຕໍ່ກັບມູນເຊື້ອອັນດີງາມ ແລະ ຜົນງານອັນໃຫ່ຍຫຼວງຂອງສະຫະພັນດັ່ງກ່າວ ພ້ອມທັງຈະນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ. ພ້ອມກັນນີ້, ກໍ່ໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວວຽກງານຂອງ ສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

ພິທີປາຖະກະຖາມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ ດັ່ງກ່າວ, ແມ່ນໄດ້ດຳເນີນເປັນເວລາເຄິ່ງວັນດ້ວຍບັນຍາກາດອັນຟົດຟື້ນ ແລະ ໄດ້ຮັບຜົນສຳເລັດຕາມລະດັບຈຸດປະສົງທີ່ວາງໄວ້.

ຂ່າວ-ພາບ: ສົມພິດ ທຳມະວົງ + ແຂກ ມຸນລະໄມ

ຢູ່ເມືອງລາວໃຊ້ເງິນກີບລາວ